
ຟຸ່ມໄມ້
ທີ່ໄຟບໍ່ໄໝ້
ສຳລັບສະບາໂຕທີ 2 ກໍລະກົດ 2025



“ແລ້ວອົງພຣະຜູ້ເປັນເຈົ້າກໍຊົງກ່າວຕໍ່ໄປອີກວ່າ, ເຮົາໄດ້ເຫັນປະຊາຊົນຂອງເຮົາ
ຖືກກົດຂີ່ຢ່າງໃດແລ້ວຢູ່ໃນປະເທດເອຢິບ. ເຮົາໄດ້ຍິນພວກເຂົາຮ້ອງຫາເຮົາ ໃຫ້
ຊ່ວຍກູ້ພວກເຂົາຈາກບັນດານາຍຄຸມຂອງພວກເຂົາ. ເຮົາຮູ້ເຫັນຄວາມທົນທຸກ
ຂອງພວກເຂົາທຸກຢ່າງ” ອພຍ 3:7, 8

ຫລັງຈາກຄວາມລົ້ມເຫລວໃນການພະຍາຍາມປົດປ່ອຍຊາວອິດສະລາເອນດ້ວຍຕົນເອງ, ໂມເຊຈຶ່ງໃຊ້ເວລາ 40 ປີ ໃນທະເລຊາຍມີດີອານໃນຖານະຄົນລ້ຽງແກະ. ໃນຊ່ວງເວລານັ້ນ, ເຖິງວ່າລາວຈະຍັງມີຄວາມສຳພັນກັບພຣະເຈົ້າ, ແຕ່ຄວາມຄິດທີ່ຈະປົດປ່ອຍຊົນຊາດອິດສະລາເອນຂອງລາວໄດ້ຖືກລະຖິ້ມແລ້ວ.



ແຕ່ພຣະເຈົ້າບໍ່ໄດ້ລະຖິ້ມຄວາມຄິດນັ້ນ. ສຳລັບພຣະອົງແລ້ວ ໂມເຊຍັງຄົງເປັນຄົນທີ່ພຣະອົງຊົງເລືອກໃຫ້ປົດປ່ອຍຊົນຊາດອິດສະລາເອນຢູ່. ເພາະວ່າພຣະອົງຍັງບໍ່ໄດ້ລືມການທີ່ປະຊາຊົນຂອງພຣະອົງຖືກກົດຂີ່ຢູ່. ເວລານີ້ ກໍ່ເປັນເວລາທີ່ຈະປົດປ່ອຍຊົນຊາດອິດສະຣາເອນອອກຈາກການເປັນທາດຮັບໃຊ້.





- ການຊົງຮຽກເອີ້ນ (ອພຍ 3):
  - ພຸ່ມໄມ້ທີ່ໄຟບໍ່ໄໝ້ (ອພຍ 3:1-6)
  - ຄຳສັ່ງຂອງພຣະເຈົ້າ (ອພຍ 3:7-12)
  - ພຣະນາມຂອງພຣະອົງ (ອພຍ 3:13-22)
- ການບັນລຸ ພັນທະກິດ (ອພຍ 4):
  - ຄຳແກ້ໂຕ ແລະ ຂໍ້ອ້າງຕ່າງໆ (ອພຍ 4:1-17)
  - ການເດີນທາງກັບປະເທດເອຢິບ (ອພຍ 4:18-31)


ການຊົງຮຽກເອີ້ນ

# ພຸ່ມໄມ້ທີ່ໄຟບໍ່ໄໝ້



“ໃນທີ່ນັ້ນເທວະດາຂອງອົງພຣະຜູ້ເປັນເຈົ້າໄດ້ປາກົດເປັນແປວໄຟ ໃຫ້ໂມເຊເຫັນຢູ່ໃນທ່າມກາງພຸ່ມໄມ້ຊຽວແຫ່ງໜຶ່ງ. ໂມເຊຈ້ອງຕາເບິ່ງໄຟ ແຕ່ບໍ່ເຫັນພຸ່ມໄມ້ໄໝ້” (ອພຍ 3:2)



ໃນ 40 ປີຂອງໂມເຊທີ່ດິນແດນມີດີອານ ສາມາດສະຫລຸບໄດ້ວ່າ: ລາວໄດ້ແຕ່ງງານ, ມີລູກຊາຍ 2 ຄົນ, ແລະ ເຮັດວຽກໃນຖານະເປັນຄົນລ້ຽງແກະໃຫ້ແກ່ພໍ່ເຖົ້າຂອງລາວ. ແລະ ລາວຍັງອຸທິດເວລາໃນຊ່ວງນັ້ນໃນການຂຽນໜັງສື 2 ເຫລັ້ມຄື: ໂຢບ ແລະ ປະຖົມມະການ, ເຊິ່ງມີຄວາມສຳຄັນຕໍ່ການເຂົ້າໃຈຫົວຂໍ້ຫລັກ ຂອງຄວາມລອດ ແຕ່ທຸກຢ່າງໄດ້ປ່ຽນແປງໄປ ໃນພິບຕາ.

ທີ່ໂຮເລັບ (ພູເຂົາຊີນາຍ), ທູດສະຫວັນຂອງພຣະເຈົ້າໄດ້ປາກົດແກ່ໂມເຊໃນພຸ່ມໄມ້ທີ່ໄຟລຸກໄໝ້ (ອພຍ. 3:1-3). ທູດສະຫວັນອົງນັ້ນແມ່ນໃຜ? ແມ່ນພຣະເຈົ້າເອງ (ອພຍ. 3:4). ກ່ອນທີ່ພຣະອົງຈະຊົງບັງເກີດເປັນມະນຸດ, ພຣະເຢຊູຊົງໄດ້ປາກົດຫລາຍຄັ້ງໃນຖານະ “ທູດສະຫວັນຂອງພຣະເຢໂຮວາ” (ປຖມກ. 22:11-17; ພຜປຄ 6:11, 16; 13:17-22; ຊຄລຢ. 3:1-2).



ເມື່ອພຣະອົງຊົງກ່າວແກ່ໂມເຊ, ພຣະອົງສະແດງພຣະອົງວ່າ ເປັນພຣະເຈົ້າຂອງອັບຣາຮາມ, ອີຊາກ ແລະ ຢາໂຄບ. ແນວຄິດນີ້ແມ່ນຊັດເຈນ: ພຣະອົງຊົງມາເຮັດໃຫ້ພຣະສັນຍາທີ່ໄດ້ສັນຍາໄວ້ກັບບັນພະບຸລຸດນັ້ນເປັນຈິງ, ແລະ ພຣະອົງຈະປະທານແຜ່ນດິນຄານາອານໃຫ້ແກ່ຊົນຊາດອິດສະຣາເອນ (ປຖມກ. 12:7; 26:3; 48:3-4).





# ພຣະບັນຊາຂອງພຣະເຈົ້າ

“ບັດນີ້ ເຮົາຈະໃຊ້ໄປຫາກະສັດຟາໂຣແຫ່ງເອຢິບ ເພື່ອນຳພາປະຊາຊົນຂອງເຮົາອອກໄປຈາກປະເທດນັ້ນ” (ອພຍ 3:10)

ພຣະເຈົ້າຊົງສຳແດງພຣະອົງວ່າ ເປັນພຣະເຈົ້າຜູ້ທີ່ : ເຫັນ , ລົງມາ, ແລະ ນຳອອກໄປ (ອພຍ. 3:7-8).

ເຫັນ: ພຣະເຈົ້າບໍ່ໄດ້ເພີກເສີຍຕໍ່ຄວາມທຸກ ພຣະອົງຊົງເຫັນທຸກສິ່ງ ໂດຍສະເພາະ ຄວາມເຈັບປວດ ແລະ ຄວາມອະຍຸຕິທຳ ທີ່ກະທຳຕໍ່ປະຊາຊົນຂອງພຣະອົງ (2 ກສ 9:26).

ລົງມາ: ພຣະອົງບໍ່ໄດ້ເມີນເສີຍ. ພຣະອົງ ໄດ້ລົງມາ ແລະ ຢ່າງທ່າມກາງພວກເຮົາ. (ອພຍ. 29:45; ຢຮ. 14:16-17)

ນຳອອກໄປ: ເມື່ອເຖິງເວລາ, ພຣະອົງຈະ ເຮັດການປົດປ່ອຍພວກເຮົາອອກຈາກ ຄວາມທຸກ ແລະ ເຮັດໃຫ້ພຣະສັນຍາ ເປັນຄວາມຈິງ(ຢຣມຢ. 29:11)

ພຣະອົງຊົງບັນຊາໂມເຊຢ່າງແນ່ນອນໃຫ້ເຮັດສິ່ງໜຶ່ງ: ຈົ່ງໄປທີ່ປະເທດເອຢິບ ແລະ ນຳພາປະຊາຊົນຂອງພຣະອົງອອກມາ (ອພຍ. 3:10, 12). ໂມເຊຮູ້ສຶກໜັກໃຈເກີນກວ່າທີ່ຈະເຮັດພາລະກິດນີ້ໄດ້. ລາວບໍ່ຢາກທີ່ຈະໃຊ້ເຫື່ອແຮງທີ່ລາວມີຢູ່ອີກຕໍ່ໄປ; ລາວຮູ້ສຶກວ່າ ຕົນເອງບໍ່ສາມາເຮັດພາລະກິດນີ້ໄດ້; ແລະ ສິ່ງທີ່ລາວເຮັດກໍ່ຄື ລາວໄດ້ອຸທານອອກມາວ່າ: “ຂ້າພຣະອົງແມ່ນໃຜ? ຂ້ານ້ອຍເປັນມະນຸດສາມັນທຳມະດາ ຈະນຳພາປະຊາຊົນ...ອອກຈາກເອຢິບໄດ້ແນວໃດ?” (ອພຍ. 3:11). ຍ້ອນຄວາມຖ່ອມໃຈຂອງລາວນັ້ນເອງ ທີ່ກາຍມາເປັນຄົນທີ່ພ້ອມແລ້ວ ສຳລັບພາລະກິດນີ້.



# ພຣະນາມຂອງພຣະເຈົ້າ

יהוה

"ພຣະເຈົ້າຊົງກ່າວແກ່ໂມເຊວ່າ: ເຮົາເປັນຜູ້ເຮົາເປັນ ເຈົ້າຈົ່ງບອກຊາວອິດສະຣາເອນດັ່ງນີ້: ຜູ້ທີ່ເອີ້ນຊື່ວ່າ "ເຮົາເປັນ" ສົ່ງຂ້ອຍມາຫາພວກເຈົ້າ ." (ອພຍ 3:14)



ພະທຸກອົງຂອງຊາວເອຢິບມີຊື່, ແຕ່ຊົນຊາດອິດສະຣາເອນ ນະມັດສະການ "ພຣະເຈົ້າຜູ້ຊົງຣິດທານຸພາບ" (ອພຍ. 6:3). ຫລັງຈາກຢູ່ພາຍໃຕ້ອິດທິພົນຂອງຊາວເອຢິບມາຫລາຍສະຕະວັດ, ຊົນຊາດອິດສະຣາເອນ ຕ້ອງການທີ່ຈະຮູ້ຊື່ພຣະຜູ້ຊ່ວຍໃຫ້ລອດຂອງພວກເຂົາ (ອພຍ. 3:13).

ໃນຍຸກນັ້ນ ຊື່ແມ່ນສະແດງເຖິງລັກສະນະຂອງບຸກຄົນ, ພຣະເຈົ້າຈຶ່ງໄດ້ປະກາດຊື່ຂອງພຣະອົງວ່າ : *'ehyeh* (ຜູ້ຊົງເປັນ). ຜູ້ຊົງນິຣັນດອນ, ດຳລົງຢູ່ນິຣັນ, ແລະຈະດຳລົງຢູ່ນິຣັນ. ຊື່ພຣະອົງແມ່ນ "ເຮົາເປັນ" (ອພຍ. 3:14).







ຕໍ່ມາການອອກສຽງພຣະນາມນີ້ ກໍ່ສູນຫາຍໄປ. ພຣະເຈົ້າຊົງຍອມໃຫ້ເປັນແບບນີ້ ເພາະສິ່ງສຳຄັນຫລາຍກວ່າຊື່ ແມ່ນລັກສະນະນິໄສຂອງຜູ້ທີ່ເປັນເຈົ້າຂອງຊື່ນັ້ນ. ພຣະອົງຊົງປັບຕົວໃຫ້ເຂົ້າກັບຄວາມຕ້ອງການຂອງພວກເຮົາ. ພວກເຮົາສາມາດເອີ້ນພຣະອົງວ່າ "ຜູ້ລ້ຽງ," "ຜູ້ຮັກສາ," "ຜູ້ຊ່ວຍ," "ພຣະບິດາ" ..., "ຄວາມຮັກ"

ສິ່ງທີ່ສຳຄັນອີກຢ່າງໜຶ່ງແມ່ນ ພຣະອົງຢາກໃຫ້ພວກເຮົາຮູ້ສຶກໃກ້ຊິດກັບພຣະອົງ, ເປັນມິດ, ຈຳເປັນຕໍ່ຊີວິດຂອງພວກເຮົາ, ແລະ ເປັນເພື່ອນທີ່ດີ.



# ການບັນລຸ
# ພດລະກິດ

# ຄຳແກ້ໂຕ ແລະ ຂໍ້ອ້າງຕ່າງໆ

«ແຕ່ໂມເຊຊິງຕອບວ່າ ຂໍພຣະອົງຊົງໃຊ້ຄົນອື່ນໄປສາ."»
(ອພຍ 4:13 )



ກ່ອນທີ່ໂມເຊຈະຍອມຮັບຕົງໆວ່າ ລາວບໍ່ໄດ້ຕ້ອງການທີ່ຈະເຮັດພັນທະກິດທີ່ພຣະເຈົ້າຊົງມອບໝາຍໃຫ້ນີ້, ລາວໄດ້ແກ້ໂຕເຖິງ 4 ຂໍ້, ທີ່ເບິ່ງຄືວ່າເປັນເຫດຜົນທີ່ໜ້າເຊື່ອຖື ໃນການທີ່ຈະບໍ່ຮັບໜ້າທີ່ດັ່ງກ່າວ. ແຕ່ສຳລັບແຕ່ລະຂໍ້ແກ້ໂຕນັ້ນ ພຣະເຈົ້າຊົງຕອບກັບດ້ວຍພັນທະສັນຍາ



| | | |
|---|---|---|
| "ຂ້າພຣະເຈົ້າແມ່ນໃຜ?" (ອພຍ. 3:11) | "ເຮົາຈະຢູ່ກັບເຈົ້າ" (ອພຍ. 3:12) | ພະລັງໃນການທຳພັນທະກິດຂອງພຣະເຈົ້າບໍ່ໄດ້ມາຈາກໂຕຂອງພວກເຮົາ, ແຕ່ໃນຄວາມຈິງແລ້ວ ພຣະອົງເປັນຜູ້ເສີມກຳລັງໃຫ້. ພຣະອົງຈະສະຖິດຢູ່ກັບພວກເຮົາຄືກັນກັບຕອນທີ່ພຣະອົງຢູ່ນຳໂມເຊ |
| "ພຣະນາມຂອງພຣະອົງແມ່ນຫຍັງ?" (ອພຍ. 3:13) | "ເຮົາເປັນ ຜູ້ເຮົາເປັນ" (ອພຍ. 3:14) | ພຣະອົງຊົງເປັນຄວາມຈິງ, ນິຣັນ, ຊົງມີຕົວຕົນ; ພຣະອົງສັນຍາ ແລະ ກໍ່ເຮັດຕາມສັນຍານັ້ນ; ບໍ່ມີການປ່ຽນແປງ ແລະ ສາມາດໄວ້ວາງໃຈໄດ້ຕະຫລອດການ. |
| "ພວກເຂົາຈະບໍ່ເຊື່ອຂ້າພະອົງ ແລະທັງຈະບໍ່ຟັງສຽງຂອງຂ້າພະອົງ" (ອພຍ. 4:1) | "ພວກເຂົາຈະເຊື່ອເຈົ້າ ເພາະໝາຍສຳຄັນທີ່ເຮົາຈະກະທຳ" (ອພຍ. 4:8) | ພຣະອົງຊົງມອບລິດເດດໃຫ້ກັບໂມເຊໃນການເຮັດການອັດສະຈັນ, ແລະ ພຣະອົງກໍ່ເຮັດວຽກຜ່ານຈິດໃຈຂອງຜູ້ຄົນໃຫ້ເຊື່ອໃນໝາຍສຳຄັນນັ້ນ. ພຣະເຢຊູຊົງສັນຍາວ່າ ຈະຮັກສາສັນຍາແບບດຽວກັນກັບພວກເຮົາພ້ອມ (ມລະ 16:17-18). |
| "ຂ້າພະອົງບໍ່ເຄີຍເວົ້າຈາຄ່ອງແຄ້ວ" (ອພຍ. 4:10) | "ເຮົາຈະສອນເຈົ້າ ວ່າຄວນເວົ້າແບບໃດ" (ອພຍ 4:12) | ພຣະອົງຜູ້ຊົງສ້າງລີ້ນຂອງພວກເຮົາ ຈະປະທານຖ້ອຍຄຳທີ່ຈຳເປັນໃນເວລາທີ່ຈຳເປັນ (ອພຍ. 4:11; ລກ 12:11-12) |

ສຸດທ້າຍແລ້ວ, ພຣະເຈົ້າໄດ້ບອກກັບໂມເຊ ເປັນຄວາມໝາຍວ່າ: ຢ່າແກ້ໂຕອີກເລີຍ ເຈົ້າເຮັດໄດ້ ແລະ ເຈົ້າຈະເປັນຜູ້ເຮັດ" (ອພຍ. 4:14-17).

# ການເດີນທາງ ກັບປະເທດ ເອຢິບ

"ໃນບ່ອນພັກແຮມຄືນໜຶ່ງຕາມທາງໄປສູ່ປະເທດເອຢິບ ອົງພຣະຜູ້ເປັນເຈົ້າໄດ້ມາຫາໂມເຊເພື່ອໝາຍຈະຂ້າເພິ່ນ" (ອພຍ 4:24)



ບາດກ້າວທຳອິດຂອງໂມເຊໃນການທີ່ຈະກັບໄປປະເທດເອຢິບນັ້ນກໍ່ຄື: ການຂໍອະນຸຍາດ ນຳພໍ່ເຖົ້າຂອງລາວ (ອພຍ. 4:18 ). ພາຄອບຄົວອອກເດີນທາງ (ອພຍ. 4:20). ແຕ່ມີບາງຢ່າງໄດ້ເກີດຂຶ້ນແບບກະທັນຫັນ. ໃນລະຫວ່າງທາງ ພຣະເຈົ້າຕ້ອງການທີ່ຈະຂ້າລາວ (ອພຍ. 4:24 ).

ສິບໂປລາຜູ້ເປັນເມຍຂອງໂມເຊ ເຂົ້າໃຈສະຖານະການໄດ້ ແລະ ໄດ້ແກ້ໄຂບັນຫາຢ່າງທັນການ ໂດຍໄດ້ຕັດທີ່ປາຍໜັງຂອງອະໄວຍະວະເພດຂອງລູກຊາຍ ມາແປະໃສ່ຂາຂອງໂມເຊ (ພິທີຕັດ) (ອພຍ. 4:25).



ເພາະໂມເຊຍັງບໍ່ໄດ້ເຮັດພິທີຕັດໃຫ້ກັບລູກຊາຍຂອງລາວເທື່ອ. ເພາະສະນັ້ນ ມັນເປັນການທີ່ບໍ່ເຊື່ອຟັງພັນທະສັນຍາທີ່ພຣະເຈົ້າໄດ້ຕັ້ງໄວ້ໃຫ້ກັບອັບຣາຮາມ
(ປຖມກ. 17:10).

ການຈົງໃຈບໍ່ເຊື່ອຟັງພຣະບັນຊາຂອງພຣະເຈົ້າ ເຮັດໃຫ້ໂມເຊບໍ່ເໝາະສົມທີ່ຈະເປັນຜູ້ນຳຂອງປະຊາຊົນ, ສະຖານະການນີ້ຕ້ອງໄດ້ຮັບການແກ້ໄຂກ່ອນທີ່ລາວຈະສາມາດເຮັດພັນທະກິດໄດ້.

## ຂໍ້ຄິດເພີ່ມ:

ໂມເຊບໍ່ໄດ້ຖືກໃຊ້ໃຫ້ເຮັດພາລະກິດນີ້ ຍ້ອນວ່າ ລາວເກັ່ງກວ່າຄົນອື່ນ, ແຕ່ເພາະລາວຍອມຈຳນົນຕໍ່ພຣະພັກພຣະເຈົ້າຢ່າງສຸດໃຈ. ເຖິງວ່າລາວຈະລາວຈະມີຂໍ້ແກ້ໂຕ ຫລື ຄວາມຮູ້ສຶກບໍ່ໝັ້ນໃຈຕ່າງໆ ແຕ່ພຣະເຈົ້າກໍຍັງຊົງຢູ່ກັບລາວ ແລະ ໜູນກຳລັງໃຫ້ລາວຕະຫລອດມາ. ເມື່ອພຣະອົງມອບໝາຍພາລະກິດໃຫ້, ພຣະອົງຈະຊົງຈັດຕຽມທຸກສິ່ງທີ່ຈຳເປັນໃຫ້.

ຄວາມລົ້ມເຫລວໃນອະດີດທີ່ໂມເຊໄດ້ເຮັດໃນການຂ້າຄົນ ບໍ່ສາມາດເອົາມາເປັນຄວາມລົ້ມເຫລວເພື່ອທີ່ຈະຂັດຂວາງແຜນການຂອງພຣະເຈົ້າໄດ້.

ພຣະເຈົ້າຊົງໄດ້ເອີ້ນໃຊ້ຜູ້ທີ່ເຫັນວ່າຕົນເອງ ບໍ່ຄູ່ຄວນ ໃຫ້ເຮັດພາລະກິດຂອງພຣະອົງ. ເພາະພຣະອົງຊົງເຫັນວ່າ ໃຜທີ່ຄູ່ຄວນ.

ທຸກໆການຊົງເອີ້ນໃຫ້ເຮັດພາລະກິດຂອງພຣະເຈົ້າ ມັກຈະມາພ້ອມກັບສັນຍາຂອງພຣະອົງທີ່ວ່າ “ເຮົາຈະຢູ່ກັບເຈົ້າ”

ພາລະກິດອັນຫຍິ່ງໃຫຍ່ ອາດຈະມາໃນເວລາທີ່ເຮົາບໍ່ພ້ອມ, ແຕ່ໃຫ້ຈື່ໄວ້ວ່າພຣະເຈົ້າຈະເຮັດໃຫ້ເຮົາກາຍເປັນຄົນທີ່ພ້ອມສະເໝີ.

“ມະນຸດຄົນໜຶ່ງຈະໄດ້ຮັບພະລັງ ແລະ ມີປະສິດທິພາບຖ້າຫາກວ່າ
ລາຍຍອມຮັບຄວາມຮັບຜິດຊອບທີ່ພຣະເຈົ້າຊົງມອບໝາຍໃຫ້ ດ້ວຍ
ຈິດວິນຍານທັງໝົດຂອງລາວ ແລະ ສະແຫວງຫາທີ່ຈະພັດທະນາຕົນ
ເອງໃຫ້ສົມກັບການຮັບໜ້າທີ່ນັ້ນຢ່າງເໝາະສົມ. ບໍ່ວ່າລາວຈະໄດ້ຢູ່
ໃນຕຳແໜ່ງທີ່ຕ້ອຍຕ່ຳໃນສາຍຕາຊາວໂລກກໍ່ຕາມ, ຫລືມີຄວາມຮູ້
ຄວາມສາມາດທີ່ຈຳກັດ. ບຸກຄົນນັ້ນຈະໄປເຖິງຄວາມຍິ່ງໃຫຍ່ທີ່ແທ້ຈິງ
ຖ້າຫາກລາວໄວ້ວາງໃຈໃນຣິດທານຸພາບຈາກເບື້ອງເທິງ ແລະ ມຸ່ງໝ
◌ັ້ນທີ່ຈະເຮັດໜ້າທີ່ຂອງຕົນດ້ວຍຄວາມຊື່ດສັ. ຖ້າຫາກວ່າໂມເຊ
ເພິ່ງກຳລັງ ແລະ ສະຕິປັນຍາຂອງຕົນເອງ ໂດຍ ຍິນດີຮັບພາລະອັນ
ຍິ່ງໃຫຍ່ນັ້ນຢ່າງກະຕືລືລົ້ນ ລາວຄົງຈະບໍ່ເໝາະສົມສຳລັບໜ້າທີ່ນັ້ນ.
ແຕ່ໃນຄວາມເປັນຈິງ ລາວໄດ້ຮູ້ສຶກເຖິງຄວາມອ່ອນແອຂອງຕົນເອງ
ນັ້ນກໍ່ເປັນເຄື່ອງໝາຍອັນໜຶ່ງ ວ່າລາວໄດ້ຕື່ນໂຕວ່າ ພຣະເຈົ້າຊົງເປັນ
ທີ່ປຶກສາ ແລະ ເປັນກຳລັງຂອງລາວ ສຳລັບວຽກງານທີ່ພຣະອົງຊົງ
ມອບໝາຍໃຫ້..”

EGW (Patriarchs and Prophets, p. 255)